## ບົດຮຽນ 15 – ຄວາມຂັດແຍ່ງ

ຄວາມຂັດແຍ່ງແມ່ນຄຳເວົ້າທີ່ຂັດກັນເອງ ຫຼືປະຕິເສດຄຳເວົ້າອື່ນ, ດັ່ງທີ່ພວກເຮົາໄດ້ສຶກສາໃນບົດທີໜຶ່ງ ວ່າພຣະຄຳພີບໍ່ໄດ້ຂັດແຍ່ງຕົວເອງ. ແຕ່ແນວໃດກໍ່ຕາມ, ຜູ້ທີ່ບໍ່ເຊື່ອໃນພຣະເຈົ້າຫຼາຍຄົນກ່າວຫາພຣະຄຳພີວ່າ ມີຄວາມຂັດແຍ່ງກັນ. ເຊິ່ງໂດຍສ່ວນໃຫຍ່ແລ້ວ ຄຣິສຕຽນຈະຕີຄວາມຫມາຍສິ່ງທີ່ພຣະຄຳພີໄດ້ລະບຸຄືນໃຫມ່ ເພື່ອລຶບລ້າງຄວາມຂັດແຍ່ງທີ່ປາກົດ ຂຶ້ນ. ເມື່ອເປັນເຊັ່ນນັ້ນ, ທັງຄົນທີ່ບໍ່ເຊື່ອ ແລະ ຄຣິສຕຽນເອງກໍ່ຖືພຣະຄຳຂອງພຣະເຈົ້າໂດຍບໍ່ຖືກຕ້ອງ. ເຖິງແມ່ນວ່າພຣະຄຳພີບໍ່ມີຄວາມຂັດແຍ່ງໃນຕົວເອງ. ແຕ່ສິ່ງທີ່ສຳຄັນ ພວກເຮົາຄວນຮັບຮູ້ວ່າພຣະຄຳພີຈະເກີດຄວາມຂັດແຍ່ງ ກໍ່ຕໍ່ເມື່ອມະນຸດສ້າງມັນຂຶ້ນມາເອງ .

ເຊິ່ງຄວາມຂັດແຍ່ງນັ້ນແມ່ນເກີດຈາກຄວາມແຕກຕ່າງລະຫວ່າງສິ່ງທີ່ຖືກປຽບທຽບເທົ່ານັ້ນ. ດັ່ງນັ້ນ, ຈົ່ງປຽບທຽບແຕ່ລະຂໍ້ ເປັນຄູ່ກັນຕາມທີ່ໄດ້ລະບຸໄວ້ລຸ່ມນີ້. [ຢ່າວຸ້ນກັບການພະຍາຍາມທີ່ຈະອະທິບາຍຄວາມແຕກຕ່າງເຫຼົ່ານີ້ໃນຕອນນີ້. ເຈົ້າຈະເຂົ້າໃຈເອງໃນຂະນະທີ່ເຈົ້າສືບຕໍ່ສຶກສາບົດຮຽນໃນພຣະຄຳພີເຫຼົ່ານີ້. ໃນບົດຮຽນນີ້, ເຈົ້າພຽງແຕ່ສັງເກດຢ່າງລະມັດລະວັງວ່າ ຈະມີຄວາມຂັດແຍ່ງທີ່ບໍ່ສາມາດປະຕິເສດໄດ້ໃນພຣະຄຳພີຫຼືບໍ່.]

### ພິທີຕັດ

"ນີ້ຄືພັນທະສັນຍາຂອງເຮົາຕໍ່ເຈົ້າກັບເຊື້ອສາຍຂອງເຈົ້າຕ້ອງຮັກສາ ຄືໃຫ້ຜູ້ຊາຍທຸກຄົນຈະຕ້ອງເຮັດພິທີຕັດ. ຊາຍຄົນໃດທີ່ບໍ່ຍອມຮັບພິທີຕັດ ຊາຍຄົນນັ້ນກໍຈະຖືກຕັດອອກຈາກພີ່ນ້ອງຂອງຕົນ ເພາະລາວບໍ່ຮັກສາພັນທະສັນທີ່ໄດ້ມີໄວ້ກັບເຮົາ."(ປະຖົມມະການ 17:10, 14). "ຈົ່ງຟັງໃຫ້ດີ ເຮົາຄືໂປໂລ ຂໍບອກພວກເຈົ້າວ່າ, ຖ້າເຈົ້າເຮັດພິທີຕັດພຣະຄຣິດບໍ່ເປັນປະໂຫຍດຫຍັງສຳລັບພວກເຈົ້າ." (ຄາລາເຕຍ 5:2).

ໃນພຣະທຳປະຖົມມະການ ພຣະເຈົ້າໄດ້ສັ່ງຜູ້ຊາຍທຸກຄົນໃຫ້ເຮັດພິທີຕັດ. ຖ້າຊາຍຄົນໃດບໍ່ເຮັດພິທີຕັດ ຜູ້ນັ້ນຈະຖືກຕັດອອກຈາກການເປັນລູກຂອງພຣະເຈົ້າ. ແຕ່ໃນອີກດ້ານໜຶ່ງ, ໂປໂລກໍໄດ້ເຕືອນເລື່ອງການເຮັດພິທີຕັດ.

### ການປິ່ນປົວ

"ຈົ່ງເຮັດໃຫ້ຄົນເຈັບໄຂ້ໄດ້ປ່ວຍຫາຍດີ ຈົ່ງເຮັດໃຫ້ຄົນຕາຍຄືນມີຊີວິດ, ຈົ່ງເຮັດໃຫ້ຜູ້ທີ່ເປັນພະຍາດຂີ້ທູດຫາຍດີ ແລະຂັບໄລ່ຜີມານຮ້າຍອອກ, ພວກເຈົ້າໄດ້ຮັບລ້າງ ໂດຍບໍ່ໄດ້ຄິດຄ່າໃດໆ ຈົ່ງໃຫ້ລ້າງ ໂດຍບໍ່ຄິດຄ່າຫຍັງເໝືອນກັນ. ພວກເຂົາຈະຈັບງູ ຫລືດື່ມຂອງມີພິດຢ່າງໃດຢ່າງໜຶ່ງ ສິ່ງເຫຼົ່ານີ້ຈະບໍ່ເປັນອັນຕະລາຍແກ່ພວກເຂົາ ເມື່ອພວກເຂົາວາງມືໃສ່ຄົນປ່ວຍ ແລະຄົນປ່ວຍນັ້ນກໍຈະຫາຍດີ." (ມັດທາຍ 10:8; ມາຣະໂກ 16:18).

"ຕໍ່ໄປຢ່າດື່ມນ້ຳສິ່ງດຽວ ແຕ່ຄວນໃຊ້ເຫຼົ້າແວງແດ່ເລັກນ້ອຍເພາະເຫັນແກ່ກະເພາະອາຫານ ແລະຄວາມອ່ອນແອທີ່ເຈົ້າມີຢູ່ເລື້ອຍນັ້ນ."

"ເອຣາຊະໂຕ ໄດ້ຄ້າງຢູ່ທີ່ເມືອງໂກຣິນໂທ ແລະເຮົາໄດ້ປະໂທຟີໂມໄວ້ທີ່ເມືອງມີເລໂຕ ເພາະວ່າລາວປ່ວຍ. ດ້ວຍເຫດນີ້ເຮົາຈຶ່ງຊື່ນໃຈ ໃນຄວາມອ່ອນແຮງ ໃນການຖືກໝິ່ນປະໝາດໃນຄວາມຍາກລຳບາກ ໃນການຖືກຂົ່ມເຫັງ ແລະໃນຄວາມຍາກຈົນ ເພື່ອເຫັນແກ່ພຣະຄຣິດ. ດ້ວຍວ່າ, ເຮົາອ່ອນແຮງເມື່ອໃດ ເຮົາກໍເຂັ້ມແຂງຂຶ້ນເມື່ອນັ້ນ. (1 ຕີໂມທຽວ 5:23; 2 ຕີໂມທຽວ 4:20; 2 ໂກຣິນໂທ 12:7-10).

ໃນມັດທາຍ ບົດທີ 10, ພຣະເຢຊູຄຣິດໄດ້ສັ່ງໃຫ້ພວກສາວົກຂອງພຣະອົງອອກໄປປິ່ນປົວຄົນເຈັບປ່ວຍ ແລະ ຟື້ນຄືນຄົນຕາຍ. ໃນມາຣະໂກບົດ 16 ໄດ້ກ່າວເຖິງຄຳສັນຍາຂອງພຣະອົງທີ່ວ່າສາວົກຂອງລາວຈະປິ່ນປົວຄົນເຈັບປ່ວຍ. ແຕ່ໃນທາງກົງກັນຂ້າມ, ໂປໂລເອງໃນຖານະເປັນສາວົກຂອງພຣະອົງຜູ້ໜຶ່ງ ລາວກໍບໍ່ໄດ້ປິ່ນປົວຊາວຕີໂມທຽວຫຼືໂທຟີມເລີຍ. ລາວພຽງແຕ່ແນະນຳຢາແກ່ຄົນທີ່ກຳລັງເຈັບເປັນເທົ່ານັ້ນ ແລ້ວກໍໄດ້ເດີນທາງໄປເມືອງອື່ນ. ເຊິ່ງໂປໂລເອງກໍມີບັນຫາທາງຮ່າງກາຍ ລາວໄດ້ພາວັນນາອະທິຖານປະມານສາມເທື່ອແຕ່ກໍບໍ່ໄດ້ຮັບການປິ່ນປົວຫຍັງເລີຍ.

<u>ກົດບັນຍັດ ແລະ ພຣະຄຸນ</u>

"ຄຳສາບແຊ່ງເປັນຂອງຜູ້ທີ່ບໍ່ເຊື່ອຟັງກົດບັນຍັດ ແລະ ຄຳສັ່ງສອນທຸກຂໍ້ຂອງພຣະເຈົ້າ." "ພຣະເຈົ້າຢາເວ ພຣະເຈົ້າຂອງພວກເຮົາບໍ່ໄດ້ເປີດເຜີຍກ່ຽວກັບປະຈຸບັນ ແລະອະນາຄົດ, ແຕ່ພຣະອົງໄດ້ສັ່ງໃຫ້ພວກເຮົາປະຕິບັດຕາມກົດບັນຍັດຂອງພຣະອົງ ພວກເຮົາພ້ອມທັງເຊື້ອສາຍຂອງພວກເຮົາຕ້ອງເຊື່ອຟັງກົດບັນຍັດນີ້ຕະຫລອດໄປ." (ພຣະບັນຍັດສອງ 27:26; 29:29). "ເພາະວ່າພວກເຈົ້າບໍ່ໄດ້ຢູ່ໃຕ້ກົດບັນຍັດ, ແຕ່ຢູ່ໃຕ້ພຣະຄຸນຂອງພຣະເຈົ້າ. ສະນັ້ນ ຖ້າພຣະວິນຍານນຳພວກເຈົ້າ, ພວກເຈົ້າກໍບໍ່ຢູ່ໃຕ້ກົດບັນຍັດ" (ໂຣມ 6:14; ຄາລາເຕຍ 5:18).

ພຣະທຳພຣະບັນຍັດສອງ ໄດ້ກ່າວໄວ້ວ່າ ຈົ່ງເຊື່ອຟັງທຸກຖ້ອຍຄຳຂອງກົດບັນຍັດ. ແນວໃດກໍຕາມ, ຊາວໂຣມ ແລະຄາລາເຕຍສອນວ່າ ພວກເຮົາບໍ່ຢູ່ໃຕ້ກົດບັນຍັດ ຖ້າພວກເຮົາຖືກນຳພາໂດຍພຣະວິນຍານບໍລິສຸດ.

<u>ການກິນຊີ້ນຫມູ</u>

"ຢ່າກິນຫມູເພາະຖືເປັນສັດມີມົນທິນ, ມັນເປັນສັດທີ່ມີເລັບຕີນເປັນກີບ ແຕ່ມັນບໍ່ຄ້ຽວເອື້ອງ. ຢ່າກິນສັດເຫຼົ່ານີ້ຫລືແມ່ນແຕ່ແຕະຕ້ອງຊາກສັດຕາຍ ເພາະສັດເຫຼົ່ານີ້ເປັນມົນທິນ." (ລະບຽບ^ພວກເລວີ 11:7-8).

"ພຣະວິນຍານກ່າວໄວ້ຢ່າງຈະແຈ້ງວ່າ, ໃນຍຸກສຸດທ້າຍຈະມີບາງຄົນປະຖິ້ມຄວາມເຊື່ອ, ຫ້າມກິນຊີ້ນ ຊຶ່ງພຣະເຈົ້າໄດ້ສ້າງອາຫານເຫຼົ່ານີ້ ເພື່ອໃຫ້ບັນດາຄົນທີ່ເຊື່ອ ແລະຮູ້ຈັກຄວາມຈິງນັ້ນ ກິນດ້ວຍການໂມທະນາຂອບພຣະຄຸນພຣະເຈົ້າ." (1 ຕີໂມທຽວ 4:1-5).

ເມື່ອພວກເຮົາອ່ານພຣະທຳລະບຽບ^ພວກເລວີໃນນັ້ນມີຄຳສອນໜຶ່ງທີ່ບອກວ່າ ຊີ້ນຫມູບໍ່ສະອາດ ແລະ ບໍ່ຕ້ອງກິນ. ແຕ່ 1 ຕີໂມທຽວສອນຢ່າງຊັດເຈນວ່າ ຊີ້ນໝູແມ່ນສະອາດ ແລະ ສາມາດກິນໄດ້.

<u>ຜົວ ຫຼື ເມຍທີ່ບໍ່ເຊື່ອ</u>

"ແລ້ວເຊການີຢາລູກຊາຍຂອງເຢຮີເອນຈາກຕະກຸນເອລາມ ກໍເວົ້າກັບເອຊະຣາວ່າ, "ພວກຂ້ານ້ອຍຂາດຄວາມເຊື່ອໃນພຣະເຈົ້າຂອງພວກຂ້ານ້ອຍ ໂດຍໄປແຕ່ງງານກັບຜູ້ຍິງຕ່າງຊາດ; ແຕ່ເຖິງຢ່າງໃດກໍດີ ຊາດອິດສະຣາເອນຍັງມີຄວາມຫວັງຢູ່. ບັດນີ້ ພວກຂ້ານ້ອຍຕ້ອງເຮັດພັນທະສັນຍາອັນຈິງຈັງຕໍ່ພຣະເຈົ້າຂອງພວກຂ້ານ້ອຍວ່າ ພວກຂ້ານ້ອຍຈະສົ່ງຜູ້ຍິງເຫຼົ່ານີ້ກັບພວກລູກໜີໄປ. ພວກຂ້ານ້ອຍຈະຂໍເຮັດຕາມທ່ານແລະຄົນອື່ນໆ ທີ່ເຄົາຣົບນັບຖືຄໍາສັ່ງຂອງພຣະເຈົ້າ. ພວກຂ້ານ້ອຍຈະເຮັດຕາມທີ່ກົດບັນຍັດກ່າວໄວ້. ແມ່ນຄວາມຮັບຜິດຊອບຂອງທ່ານທີ່ຕ້ອງລົງມືດໍາເນີນການ. ສ່ວນພວກຂ້ານ້ອຍແລ້ວຈະໜູນຫລັງທ່ານ; ສະນັ້ນ ທ່ານຈົ່ງລົງມືດໍາເນີນການໂລດ." ປະໂຣຫິດເອຊະຣາໄດ້ຢືນຂຶ້ນເວົ້າຕໍ່ພວກເຂົາວ່າ, "ພວກທ່ານຂາດຄວາມເຊື່ອ ແລະໄດ້ນໍາເອົາຄວາມຜິດມາສູ່ຊາດອິດສະຣາເອນ ຍ້ອນການແຕ່ງງານກັບຜູ້ຍິງຕ່າງຊາດ. ບັດນີ້ ໃຫ້ພວກທ່ານສາລະພາບບາບຕໍ່ພຣະເຈົ້າຢາເວ ພຣະເຈົ້າຂອງປູ່ຍ່າຕາຍາຍຂອງພວກທ່ານ ແລະປະພຶດໃຫ້ພຣະອົງພໍພຣະໄທ. ຈົ່ງແຍກຕົວອອກຈາກຄົນຕ່າງຊາດທີ່ອາໄສຢູ່ໃນດິນແດນຂອງພວກເຮົາ ແລະກໍາຈັດພວກເມຍຕ່າງຊາດຂອງພວກເຈົ້າໃຫ້ອອກໜີໄປເສຍ." ປະຊາຊົນໄດ້ຮ້ອງຕອບຂຶ້ນວ່າ, "ພວກຂ້ານ້ອຍຈະປະຕິບັດຕາມທຸກສິ່ງທີ່ທ່ານເວົ້າມາ." (ເອຊະຣາ 10:2-4,10-12). ເຮົາປາຖະໜາໃຫ້ທຸກຄົນເປັນເໝືອນຕົວເຮົາ ແຕ່ທຸກຄົນກໍໄດ້ຮັບຂອງປະທານຈາກພຣະເຈົ້າອັນເໝາະສົມກັບຕົນ ຜູ້ໜຶ່ງໄດ້ຮັບຢ່າງນັ້ນ ແລະອີກຜູ້ໜຶ່ງໄດ້ຮັບຢ່າງນີ້. ເຮົາຂໍກ່າວແກ່ຄົນທີ່ຍັງເປັນໂສດ ແລະບັນດາຍິງໝ້າຍວ່າ ຖ້າພວກເຂົາຈະຢູ່ເໝືອນຢ່າງເຮົາກໍດີແລ້ວ. ແຕ່ຖ້າພວກເຂົາຄວບຄຸມຕົນເອງບໍ່ໄດ້ ກໍຈົ່ງໃຫ້ພວກເຂົາແຕ່ງງານເສຍ ເພາະວ່າການທີ່ແຕ່ງງານນັ້ນ ກໍດີກວ່າມີຕັນຫາເຜົາໄໝ້ຢູ່ໃນໃຈ. ສໍາລັບຄົນທີ່ແຕ່ງງານແລ້ວນັ້ນ ເຮົາຂໍສັ່ງ ຊຶ່ງບໍ່ແມ່ນເຮົາສັ່ງເອງ ແຕ່ແມ່ນອົງພຣະຜູ້ເປັນເຈົ້າເປັນຜູ້ສັ່ງ ຢ່າໃຫ້ເມຍປະຜົວຂອງຕົນ. ແຕ່ຖ້ານາງປະຜົວຂອງຕົນໄປ ນາງຕ້ອງຢູ່ເປັນໂສດ ຫລືບໍ່ດັ່ງນັ້ນ ໃຫ້ນາງຄືນດີກັບຜົວອີກ ແລະຜົວກໍຢ່າປະຮ້າງເມຍຂອງຕົນ. ສໍາລັບພວກອື່ນນັ້ນ ເຮົາກ່າວດັ່ງນີ້ວ່າ, (ບໍ່ແມ່ນອົງພຣະຜູ້ເປັນເຈົ້າກ່າວ) "ຖ້າພີ່ນ້ອງຄົນໃດທີ່ມີເມຍເປັນຄົນທີ່ບໍ່ເຊື່ອ ແລະນາງພໍໃຈທີ່ຈະຢູ່ກັບຜົວນັ້ນຕໍ່ໄປ ຜົວກໍບໍ່ຄວນປະຮ້າງເມຍ," (1 ໂກຣິນໂທ 7:12-14). ເອຊະຣາໄດ້ເຕືອນພວກຜູ້ຊາຍວ່າ ຕ້ອງແຍກຕົວອອກຈາກເມຍທີ່ບໍ່ເຊື່ອ ແຕ່ໂປໂລກະຕຸ້ນຊາຍທັງຫຼາຍບໍ່ໃຫ້ປະຮ້າງເມຍທີ່ບໍ່ເຊື່ອ.

## ວັນຊະບາໂຕ

"ຈົ່ງຖືວັນຊະບາໂຕ ແລະຍຶດຖືໄວ້ເປັນວັນສັກສິດ." (ອົບພະຍົບ 20:8).
"ເຫດສະນັ້ນ ຢ່າໃຫ້ຜູ້ໃດກ່າວໂທດພວກເຈົ້າໃນເລື່ອງການກິນການດື່ມ ຫລືໃນເລື່ອງວັນສໍາຄັນທາງສາສະໜາ ຫລືໃນເລື່ອງງານສະຫລອງວັນເດືອນອອກໃໝ່ ຫລືໃນເລື່ອງວັນຊະບາໂຕ. ແຕ່ບັດນີ້ເຈົ້າທັງຫລາຍຮູ້ຈັກພຣະເຈົ້າແລ້ວ (ຫລືຈະເວົ້າໃຫ້ຖືກກວ່າ ກໍວ່າພຣະເຈົ້າຊົງຮູ້ຈັກເຈົ້າທັງຫລາຍແລ້ວ) ດ້ວຍເຫດໃດພວກເຈົ້າຈຶ່ງຈະກັບໄປຫາອໍານາດສິ່ງສັກສິດທໍາມະດາ ອັນອ່ອນແອແລະບໍ່ມີປະໂຫຍດ? ພວກເຈົ້າຢາກຕົກເປັນຂ້ອຍຂ້າຂອງມັນອີກບໍ? ພວກເຈົ້າຖືວັນ ຖືເດືອນ ຖືລະດູ ແລະຖືປີ. ເຮົາວິຕົກນໍາເຈົ້າທັງຫລາຍ ຢ້ານວ່າການໜັກໜ່ວງທີ່ເຮົາໄດ້ເຮັດສໍາລັບພວກເຈົ້ານັ້ນ ຈະບໍ່ເປັນປະໂຫຍດ." (ໂກໂລຊາຍ 2:16; ຄາລາເຕຍ 4:9-11). ໜຶ່ງໃນພຣະບັນຍັດສິບປະການໃນອົບພະຍົບຄື ໃຫ້ຖືວັນຊະບາໂຕເປັນວັນສັກສິດ , ແຕ່ໂປໂລກ່າວວ່າ ພວກເຮົາບໍ່ຄວນຖືວັນສັກສິດເຊັ່ນ ວັນຊະບາໂຕ.

## ເຊື້ອສາຍ

"ຕະກຸນຕ່າງໆຕໍ່ໄປນີ້ແມ່ນປະໂຣຫິດທີ່ ບໍ່ມີເອກະສານ ເພື່ອພິສູດເຖິງບັນພະບຸລຸດຂອງຕົນ ມີດັ່ງນີ້: ໂຮບາອີຢາ, ຮັກກົດ ແລະບາກຊິນໄລ. (ບັນພະບຸລຸດຂອງຕະກຸນຂອງບາກຊິນໄລທີ່ເປັນປະໂຣຫິດ ໄດ້ແຕ່ງງານກັບຍິງຜູ້ໜຶ່ງຈາກຕະກຸນບາກຊິນໄລແຫ່ງກີເລອາດ ແລະໄດ້ໃສ່ຊື່ຕາມຕະກຸນພໍ່ເຖົ້າຂອງຕົນ.) ເນື່ອງຈາກຄົນເຫຼົ່ານີ້ພິສູດບໍ່ໄດ້ວ່າແມ່ນຜູ້ໃດທີ່ເປັນບັນພະບຸລຸດຂອງຕົນ; ດັ່ງນັ້ນ ພວກເຂົາຈຶ່ງບໍ່ໄດ້ຮັບໃຊ້ເປັນປະໂຣຫິດ." (ເອຊະຣາ 2:62; 1 ຂ່າວຄາວ 31:16-19).

"ຈົ່ງບອກພວກເຂົາໃຫ້ເລີກສົນໃຈເລື່ອງນິຍາຍຕ່າງໆ ແລະເລື່ອງເຊື້ອສາຍອັນບໍ່ຮູ້ສິ້ນສຸດ ຊຶ່ງເປັນເຫດໃຫ້ເກີດການໂຕ້ຖຽງກັນເທົ່ານັ້ນ ແທນທີ່ຈະເປັນໄປຕາມແຜນການຂອງພຣະເຈົ້າອັນກ່ຽວກັບຄວາມເຊື່ອ." "ແຕ່ຈົ່ງຫຼີກລ້ຽງຈາກການໂຕ້ຖຽງອັນໂງ່ງ່າວ, ເລື່ອງລໍາດັບເຊື້ອວົງອັນຍືດຍາວ, ການຂັດແຍ່ງ ແລະ ພະຍາຍາມເຮັດຕາມກົດບັນຍັດ. ເພາະມັນບໍ່ໄດ້ຜົນປະໂຫຍດໃດໆ" (1 ຕີໂມທຽວ 1:4; ຕີໂຕ 3:9). ໃນເອຊະຣາ ແລະ 1 ຂ່າວຄາວ ເຊື້ອສາຍແມ່ນມີຄວາມສໍາຄັນຫຼາຍ ແລະ ມັນເປັນສິ່ງຈໍາເປັນທີ່ຈະເອົາໃຈໃສ່ກັບມັນ. ໃນ 1 ຕີໂມທຽວ ແລະ ຕີໂຕເຊື້ອສາຍຂອງແມ່ນບໍ່ສໍາຄັນ ແລະ ເຈົ້າບໍ່ຕ້ອງພະຍາຍາມທີ່ຈະທໍາຄວາມເຂົ້າໃຈເລື່ອງນີ້.

## ຈົ່ງເວົ້າພາສາແປກໆ

"ທຸກຄົນໃນທີ່ນັ້ນ ຈຶ່ງເຕັມໄປດ້ວຍພຣະວິນຍານບໍຣິສຸດເຈົ້າ ແລະເລີ່ມປາກພາສາຕ່າງໆ ຕາມທີ່ພຣະວິນຍານຊົງໂຜດໃຫ້ພວກເພິ່ນເວົ້າ. ຂະນະນັ້ນ ນະຄອນເຢຣູຊາເລັມມີຊາວຍິວ ຈາກທຸກໆປະເທດໃນໂລກມາພັກອາໄສຢູ່ ແລະຊາວຍິວເຫຼົ່ານີ້ເປັນຄົນຍໍາເກງພຣະເຈົ້າ. ເມື່ອພວກເຂົາໄດ້ຍິນສຽງນີ້ແລ້ວ ກໍມີປະຊາຊົນມາເຕົ້າໂຮມກັນຢ່າງໜາແໜ້ນ ພວກເຂົາທັງໝົດຕ່າງກໍຕື່ນເຕັ້ນປະຫລາດໃຈ ເພາະໄດ້ຍິນບັນດາຄົນເຫຼົ່ານັ້ນ ເວົ້າພາສາທ້ອງຖິ່ນຂອງຕົນ." (ກິດຈະການ 2:4-6).

"ແລະໃຫ້ຄົນໜຶ່ງມີຄວາມເຊື່ອ ແຕ່ແມ່ນພຣະວິນຍານອົງດຽວກັນ ແລະໂຜດໃຫ້ຄົນໜຶ່ງອີກ ມີຣິດອໍານາດໃຫ້ຄົນດີພະຍາດ ແຕ່ແມ່ນພຣະວິນຍານອົງດຽວ. ແລະໃຫ້ຄົນໜຶ່ງມີຣິດອໍານາດເຮັດການອັດສະຈັນ ແລະໃຫ້ຄົນໜຶ່ງມີຂອງປະທານໃນການປະກາດພຣະທໍາ ແລະໂຜດໃຫ້ຄົນໜຶ່ງອີກຮູ້ສັງເກດວິນຍານຕ່າງໆ ແລະໃຫ້ຄົນໜຶ່ງມີຄວາມສາມາດເວົ້າພາສາແປກໆ ແລະໂຜດໃຫ້ຄົນໜຶ່ງອີກມີຄວາມສາມາດແປພາສາແປກໆ. ສິ່ງສາລະພັດເຫຼົ່ານີ້ ແມ່ນພຣະວິນຍານອົງດຽວກັນຊົງບັນດານ ແລະປະທານແກ່ທຸກຄົນຕາມນໍ້າພຣະໄທຂອງພຣະອົງ. ແລະພຣະເຈົ້າໄດ້ຊົງຕັ້ງບາງຄົນໄວ້ໃນຄຣິສຕະຈັກຄື: ໜຶ່ງແມ່ນອັກຄະສາວົກ ສອງແມ່ນຜູ້ປະກາດພຣະທໍາ ສາມແມ່ນອາຈານ ແລ້ວຕໍ່ຈາກນັ້ນກໍມີຜູ້ເຮັດການອິດທິຣິດຕ່າງໆ ຜູ້ມີອໍານາດໃຫ້ດີພະຍາດໂຣຄາ ຜູ້ອຸປະຖໍາ ຜູ້ປົກຄອງ ແລະຜູ້ເວົ້າພາສາແປກໆ. ບໍ່ແມ່ນທຸກຄົນທີ່ເປັນອັກຄະສາວົກ ຫລືເປັນຜູ້ທໍານວາຍ ຫລືເປັນອາຈານ ບໍ່ແມ່ນທຸກຄົນທີ່ເຮັດການອັດສະຈັນໄດ້ ຫລືເຮັດໃຫ້ດີພະຍາດໄດ້ ຫລືເວົ້າພາສາແປກໆໄດ້ ຫລືແປພາສານັ້ນໄດ້. ເຖິງແມ່ນການປະກາດພຣະທໍາກໍຈະຖືກຍົກເລີກ ຫລືການເວົ້າພາສາແປກໆກໍຈະເຊົາ ແລະວິຊາຄວາມຮູ້ກໍຈະຖືກຍົກເລີກເສຍ, ແຕ່ຄວາມຮັກ

ຍັງຈະຕັ້ງໝັ້ນຄົງຢູ່ຕະຫລອດໄປ. ເພາະວ່າຄວາມຮູ້ຂອງເຮົານັ້ນບໍ່ສົມບູນ ແລະການປະກາດພຣະທຳກໍບໍ່ສົມບູນ, ແຕ່ເມື່ອຄວາມສົມບູນມາເຖິງແລ້ວ ຄວາມບົກພ່ອງນັ້ນກໍຈະຖືກຍົກເລີກເສຍ. (1 ໂກຣິນໂທ 12:9-11,28-30; 1 ໂກລິນໂທ 13:8-10).

ພວກສາວົກໃນກິດຈະການບົດທີ 2 ລ້ວນແຕ່ເວົ້າພາສາທົ່ວໄປ. ໃນ 1 ໂກຣິນໂທບົດທີ 12 ພວກເຂົາບໍ່ໄດ້ເວົ້າພາສາທົ່ວໄປ. ຍິ່ງໄປກວ່ານັ້ນ, ໃນບົດທີ 13 ຊາວໂກລິນໂທໄດ້ຖືກບອກວ່າ ພາສາຈະຢຸດເວົ້າ.

<u>ກົດບັນຍັດຂອງພຣະອົງ</u>

"ຈົ່ງເຊື່ອຟັງກົດບັນຍັດຂອງເຮົາ ແລະ ເຮັດແຕ່ສິ່ງໄດ້ສັ່ງພວກເຈົ້າໄວ້ເທົ່ານັ້ນ ເຮົາແມ່ນພຣະເຈົ້າຢາເວ ພຣະເຈົ້າຂອງພວກເຈົ້າ." _ "ຈົ່ງຖືປັດສະຄາຂອງອົງພຣະຜູ້ເປັນເຈົ້າ; ຕາມລະບຽບການ ແລະ ກົດເກນທຸກຢ່າງ. ພຣະອົງຈະເຮັດຢ່າງນັ້ນ" (ລະບຽບພວກເລວີ 18:4; ຈົດເຊັນບັນຊີ 9:14).

"ໄດ້ຍົກເລີກຄວາມເປັນສັດຕູໃນເນື້ອໜັງຂອງພຣະອົງ, ແມ່ນແຕ່ກົດບັນຍັດທີ່ບັນຈຸຢູ່ໃນພິທີການ"._ "ພຣະອົງໄດ້ໄດ້ລຶບລ້າງກົດບັນຍັດພ້ອມກັບກົດລະບຽບຕ່າງໆ ທີ່ຜູກມັດຂັດຂວາງພວກເຮົາ ໂດຍຕອກຕິດໄວ້ທີ່ໄມ້ກາງແຂນ." (ເອເຟໂຊ 2:15; ໂກໂລຊາຍ 2:14). ພຣະທຳລະບຽບພວກເລວີ ແລະ ພຣະທຳຈົດເຊັນບັນຊີສັ່ງໃຫ້ຮັກສາກົດບັນຍັດບາງຢ່າງ. ເອເຟໂຊ ແລະ ໂກໂລຊາຍສອນວ່າ ກົດບັນຍັດຖືກຍົກເລີກ; ລຶບລ້າງ; ເອົາອອກໄປແລ້ວ.

ຮູບ

ຄຳຖາມທວນຄືນ ບົດຮຽນ 15 - ຄວາມຂັດແຍ່ງ

ຖືກ ຫຼື ຜິດ

1. ພຣະຄຳພີບໍ່ມີຂໍ້ຂັດແຍ່ງໃດໆໃນຕົວມັນ.

2. ສາວົກຂອງພຣະຄຣິດບໍ່ເຄີຍຖືກສັ່ງໃຫ້ປິ່ນປົວຄົນປ່ວຍ ຫຼື ຟື້ນຄືນຄົນທີ່ຕາຍແລ້ວ.

3. ບາງສາສະໜາຫ້າມບໍ່ໃຫ້ກິນຊີ້ນໝູ ແຕ່ບໍ່ມີຂໍ້ໃດໃນພຣະຄຳພີທີ່ຫ້າມບໍ່ໃຫ້ກິນຊີ້ນຫມູເປັນອາຫານ.

4. ປຶ້ມບັນທຶກຂອງໂກໂລຊາຍສອນວ່າ ຕ້ອງຖືວັນສະບາໂຕ.

ຄຳຖາມແບບປາລະໄນ

5. ໃນກິດຈະການ 2:

ກ) ສາວົກທຸກຄົນໄດ້ເວົ້າພາສາທົ່ວໄປ.

ຂ) ສາວົກບາງຄົນເທົ່ານັ້ນທີ່ເວົ້າພາສາທົ່ວໄປ.

ຄ) ພຣະວິນຍານບໍລິສຸດໄດ້ປະທານຂອງພຣະລາດຊະທານໃນການປາກພາສາແປກໆໃຫ້ພວກສາວົກເກືອບທຸກຄົນ.

ງ) ຂອງປະທານໃນການປາກພາສາແປກໆໄດ້ຢຸດເຊົາແລ້ວ.

6. ພຣະຄຳພີ:

ກ) ມີຂໍ້ຂັດແຍ່ງຫຼາຍ.

ຂ) ມີຄວາມຜິດພາດຈຳນວນຫຼາຍ.

ຄ) ປະກອບດ້ວຍຄວາມຄົມຊັດຫຼາຍ.

ງ) ສາມາດເຂົ້າໃຈໄດ້ໂດຍອາຈານ ຫຼື ປະໂລຫິດເທົ່ານັ້ນ.

7. ໃນພຣະຄຳພີເດີມ, ພິທີຕັດ:

ກ) ເປັນທາງເລືອກ.

ຂ) ເປັນຄຳສັ່ງ.

ຄ) ບໍ່ເຄີຍປະຕິບັດ.

ງ) ບໍ່ເຄີຍຖືກກ່າວເຖິງ.

ຕື່ມໃສ່ຊ່ອງຫວ່າງ

8. ຢາໂກໂບກ່າວວ່າ ຜູ້ຊາຍແມ່ນຖືກຊຳລະໂດຍ__________________.

9. ໂປໂລໄດ້ຊຸກຍູ້ຜູ້ຊາຍບໍ່ໃຫ້___________ຈາກເມຍທີ່ບໍ່ເຊື່ອຂອງພວກເຂົາ.

10. ໃນພຣະທຳເອຊະຣາ ແລະ 1 ຂ່າວຄາວ____________ ມີຄວາມສຳຄັນຫຼາຍ.